ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ
ກົມໃຫຍ່ສັນຕິບານ
ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ເລກທີ...740....../ຕມ
ນະຄອນຫຼວງວຽງຈັນ, ວັນທີ..27.ເມສາ.2021

# ແຈ້ງການ

ເຖິງ : ບັນດາ ດ່ານຕຳຫຼວດກວດຄົນເຂົ້າ-ອອກເມືອງ ສາກົນ ທີ່ມີຊາຍແດນຕິດຈອດກັບ ຣາຊະອານາຈັກໄທ
ເລື່ອງ: ການຮັບເອົາພົນລະເມືອງລາວ ຫຼື ແຮງງານລາວ ທີ່ຕົກຄ້າງ ຢູ່ ຣາຊະອານາຈັກໄທ ກັບຄືນປະເທດ

- ອີງຕາມ ຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ບັນດາ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດ ບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນແຕ່ລະໄລຍະ;

- ອີງຕາມ ຂໍ້ຕົກລົງ ຂອງ ທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 084/ປກສ, ລົງວັນທີ 03 ກຸມພາ 2010 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ;

- ອີງຕາມ ທິດຊີ້ນຳຂອງ ຄະນະນຳກະຊວງປ້ອງກັນຄວາມສະຫງົບ ກໍຄືກົມໃຫຍ່ສັນຕິບານ ໃນຄັ້ງວັນທີ 26 ເມສາ 2021.

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂໍຖືເປັນກຽດ ແຈ້ງມາຍັງທ່ານ ຊາບວ່າ: ເພື່ອປະຕິບັດຕາມຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ບັນດາ ແຈ້ງການ ກ່ຽວກັບມາດຕະການ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດ ຂອງພະຍາດ COVID-19 ບໍ່ໃຫ້ແຜ່ລາມອອກເປັນວົງກວ້າງ ຢູ່ ສປປ ລາວ. ຈຶ່ງແຈ້ງໃຫ້ບັນດາທ່ານ ເອົາໃຈໃສ່ປະສານສົມທົບກັບດ່ານເຊື່ອງໜ້າ ເພື່ອຮັບເອົາ ແຮງງານລາວ ຫຼື ພົນລະເມືອງລາວ ທີ່ຕົກຄ້າງ ຢູ່ ຣາຊະອານາຈັກໄທ, ໂດຍຕ້ອງປະຕິບັດຕາມກົນໄກ ຄືດັ່ງນີ້:

1. ແຮງງານລາວ ຫຼື ພົນລະເມືອງລາວ ທີ່ມີເອກະສານເດີນທາງຖືກຕ້ອງ, ຄົບຖ້ວນ ໃຫ້ຖືເອົາກົນໄກການປະສານສົມທົບ ກັບດ່ານເຊື່ອງໜ້າ ເພື່ອຮັບເອົາເຂົາເຈົ້າກັບຄືນ ສປປ ລາວ;

2. ການຮັບເອົາແຮງງານລາວ ຫຼື ພົນລະເມືອງລາວ ທີ່ເດີນທາງໄປ ຣາຊະອານາຈັກໄທ ແບບບໍ່ຖືກຕ້ອງ ໃຫ້ປະຕິບັດ ຄືດັ່ງນີ້: (ສຶກສາອົບຮົມ, ກ່າວເຕືອນ ແລະ ຫ້າມບໍ່ໃຫ້ມີການປັບໃໝ)

2.1 ຜູ້ທີ່ມີເອກະສານ ຫຼື ຂໍ້ມູນ ທີ່ສາມາດຢັ້ງຢືນວ່າເປັນພົນລະເມືອງລາວ ເຊັ່ນ: ບັດປະຈຳຕົວ, ສຳມະໂນຄົວ ຫຼື ໜັງສືຢັ້ງຢືນອື່ນ ໃຫ້ປະຕິບັດ ຕາມກົນໄກການປະສານສົມທົບ ກັບດ່ານເຊື່ອງໜ້າ ເພື່ອຮັບເອົາເຂົາເຈົ້າກັບຄືນ ສປປ ລາວ;

2.2 ຜູ້ທີ່ບໍ່ມີເອກະສານ ຫຼື ຂໍ້ມູນ ທີ່ບໍ່ສາມາດຢັ້ງຢືນວ່າເປັນພົນລະເມືອງລາວ ໃຫ້ປະສານສົມທົບກັບດ່ານເຊື່ອງໜ້າ ເພື່ອເກັບກຳຂໍ້ມູນ ເຊັ່ນ: ຊື່, ນາມສະກຸນ, ວັນເດືອນປີເກີດ, ທີ່ຢູ່ໃນ ສປປ ລາວ, ໄປເຮັດວຽກຫຍັງຢູ່ ໄທ, ເບີໂທພໍ່-ແມ່ ຫຼື ຍາດພີ່ນ້ອງຢູ່ ລາວ ເພື່ອສັງລວມຂໍ້ມູນ ປະສານຫາພາກສ່ວນກ່ຽວຂ້ອງ ພິສູດວ່າເປັນພົນລະເມືອງລາວແທ້ ກ່ອນຈະອະນຸຍາດ ໃຫ້ເດີນທາງເຂົ້າ ສປປ ລາວ;

3. ການຮັບເອົາ ພົນລະເມືອງລາວ ຫຼື ແຮງງານລາວ ທຸກຄັ້ງ ຕ້ອງຮີບຮ້ອນປະສານສົມທົບກັບ ຄະນະສະເພາະກິດ ທ້ອງຖິ່ນນັ້ນ ເພື່ອພາຕົວພວກກ່ຽວ ໄປກວດຫາເຊື້ອ COVID-19 ແລະ ໄປຈຳກັດບໍລິເວນ ຕາມສະຖານທີ່ ທີ່ກຳນົດໄວ້. ຈາກນັ້ນ ໃຫ້ສັງລວມຂໍ້ມູນລາຍງານ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳວັນ (14:00 ໂມງ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ້າກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ສາຍສະໜິງ ສີວິໄລ


ເບີໂທຕິດຕໍ່:
ແຜນກ ກົມ ຕມ: 021 251 287
ພັທ ເພັດດາວົງ ແກ້ວກັນຍາ 020 5552 6405
ຣອ ສຸກພາລັກ ທຳມະວົງ 020 5679 6061
ຣອ ວອນປະເສີດ ຄູນຄຳກ້ອນ 020 7778 5555